University of Basel

# Gender and Labour in the Global South

Article – Laotian

This translation is for a better understanding of the English texts. We are very happy if you join the discussions. Please note that all contributions in the comment section and in the discussion steps need to be in English.

**Gender aspects in Sustainable Development Goals 5 and 8**

5 ເປົ້າໝາຍ ບົດບາດທາງເພດ ເພື່ອຄວາມຍືນຍົງ (Sustainable Development Goals (SDGs) ແລະ 8 ແຜນງານ ຮອດປີ 2030

**Content:**

***5 ເປົ້າໝາຍ ແລະ 8 ແຜນງານ ບົດບາດທາງເພດ ເພື່ອການພັດທະນາແບບຍືນຍົງ ຮອດປີ 2030 ແມ່ນກ່ຽວຂ້ອງກັບຄຳຖາມທີ່ວ່າ ຄວາມຍືນຍົງໃນລະດັບໂລກຕ້ອງການທັດສະນະບົດບາດຍິງຊາຍແນວໃດແດ່? ໄດ້ແບ່ງເປົ້າຫມາຍຍ່ອຍອອກເປັນຫຼາຍໆຂໍ້. ໃນທີ່ນີ້ພວກເຮົາຂໍແລກປ່ຽນທັດສະນະ ກັບ ທ່ານດັ່ງລຸ່ມນີ້:***

ດັ່ງທີ່ພວກເຮົາໄດ້ຮູ້ນຳກັນແລ້ວວ່າ, 5 ເປົ້າໝາຍການພັດທະນາແບບຍືນຍົງ ໄດ້ຮຽກຮ້ອງໃຫ້ມີໂອກາດຄວາມສະເໝີພາບລະຫວ່າງ ຜູ້ຊາຍ ແລະ ແມ່ຍິງ ໃນການພັດທະນາເສດຖະກິດ, ການລຶບລ້າງທຸກຮູບແບບ ຂອງຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ, ການລຶບລ້າງການບັງຄັບໃຫ້ແຕ່ງງານ ແລະ ການມີສ່ວນຮ່ວມເທົ່າທຽມກັນ ໃນທຸກລະດັບ.

ເປົ້າໝາຍຍ່ອຍ ຂໍ້ທີ 5.4, “ການຮັບຮູ້ ແລະ ປະເມີນຄ່າທີ່ບໍ່ໄດ້ຮັບຄ່າຈ້າງ ແລະ ວຽກຄົວເຮືອນ”, ຊຶ່ງເນັ້ນໜັກເຖິງຄວາມສຳຄັນ ຂອງແຮງງານທີ່ບໍ່ໄດ້ຮັບຄ່າຈ້າງ. ແມ່ນມີຄວາມກ່ຽວຂ້ອງຫຼາຍ ພາຍຫຼັງທີ່ໄດ້ວິເຄາະຕະຫຼາດແຮງງານ ດ້ານທັດສະນະທາງເພດ. ວຽກງານການຈະເລີນພັນ ແລະ ວຽກງານທີ່ບໍ່ໄດ້ຮັບຄ່າຈ້າງ ແມ່ນພາກສ່ວນໜຶ່ງທີ່ສຳຄັນ ດ້ານເສດຖະກິດ ແລະ ມີຄວາມສຳຄັນຕໍ່ການມີວຽກເຮັດ ຢູ່ຂະແໜງການຜະລິດ. ວຽກງານເຫຼົ່ານີ້ສ່ວນຫຼາຍແມ່ນແມ່ຍິງ ເປັນຜູ້ປະຕິບັດ.

ເປົ້າໝາຍການພັດທະນາແບບຍືນຍົງ 8 ແຜນງານນີ້ ແມ່ນມີຈຸດປະສົງ “ຊຸກຍູ້ການເຕີບໂຕດ້ານເສດຖະກິດແບບຍືນຍົງ, ແບບມີສ່ວນຮ່ວມ ແລະ ຄວາມຍືນຍົງ, ການມີວຽກເຮັດງານທຳຢ່າງຄົບຖ້ວນ ແລະ ມີປະສິດທິຜົນ ແລະ ວຽກງານທີ່ເໝາະສົມສຳລັບທຸກຄົນ”. ເປົ້າໝາຍຍ່ອຍ ຂໍ້ທີ 10 ປະກອບໄປດ້ວຍການແກ້ໄຂການເຕີບໂຕທາງດ້ານເສດຖະກິດ ແລະ ການຈ້າງງານເຕັມຮູບແບບ ພ້ອມທັງວຽກງານທີ່ເໝາະສົມ.

ຕົວຢ່າງ, ເປົ້າໝາຍຍ່ອຍ ຂໍ້ທີ 8.1 ລະບຸວ່າ: “ຄວາມຍືນຍົງດ້ານການເຕີບໂຕຂອງເສດຖະກິດຕໍ່ຫົວຄົນຕາມສະພາບການແຫ່ງຊາດ ແລະ ໂດຍສະເພາະ ແມ່ນການເຕີບໂຕຂອງຜະລິດຕະພັນພາຍໃນຢ່າງໜ້ອຍແມ່ນ 7 ເປີເຊັນຕໍ່ປີ ສຳລັບປະເທດດ້ອຍພັດທະນາ”. ສິ່ງທີ່ສຳຄັນ ໃຫ້ສັງເກດວ່າ ການເຕີບໂຕດ້ານເສດຖະກິດ ເປັນພຽງແຕ່ວິທີການໜຶ່ງ ທີ່ອາດຈະບໍ່ຖືກສະເໝີໄປ, ແຕ່ການນຳໄປສູ່ການມີວຽກເຮັດງານທຳ ແລະ ສ້າງເງື່ອນໄຂສຳລັບການເຮັດວຽກ ແມ່ນເປັນວິທີທີ່ສຳຄັນກວ່າ. ນອກຈາກນັ້ນ, ຂໍ້ມູນສະແດງໃຫ້ເຫັນວ່າ ການເຕີບໂຕດ້ານເສດຖະກິດທີ່ຫຼຸດລົງ ເຮັດໃຫ້ເກີດຄວາມບໍ່ສະເໝີພາບພາຍໃນສັງຄົມຫຼາຍກ່ວາການຂະຫຍາຍຕົວທາງດ້ານເສດຖະກິດ. ເຖິງຢ່າງໃດ

ກໍ່ຕາມ, ການພົວພັນລະຫວ່າງການເຕີບໂຕດ້ານເສດຖະກິດ, ການຫຼຸດຜ່ອນຄວາມທຸກຍາກ ແລະ ຄວາມບໍ່ສະເໝີພາບ ແມ່ນສະຫຼັບສັບຊ້ອນ.

ເປົ້າໝາຍຍ່ອຍ ຂໍ້ທີ 8.5 ໄດ້ລະບຸວ່າ: "ຮອດປີ 2030, ຈະບັນລຸໄດ້ດ້ານການມີວຽກເຮັດງານທຳຢ່າງເຕັມສ່ວນ, ມີປະສິດຕິພາບ ແລະ ມີວຽກເຮັດງານທຳທີ່ເໝາະສົມສຳລັບທັງຍິງ ແລະ ຊາຍ, ລວມທັງໄວໜຸ່ມ ແລະ ຄົນພິການ, ແລະ ເງິນເດືອນກໍ່ເທົ່າທຽມກັບຄຸນຄ່າ/ມູນຄ່າ ຂອງວຽກ". ເປົ້າໝາຍຍ່ອຍນີ້ ໄດ້ຮຽກຮ້ອງໃຫ້ການມີວຽກເຮັດງານທຳທີ່ເໝາະສົມສຳລັບຜູ້ອອກແຮງງານທັງໝົດ ແລະ ໄດ້ເນັ້ນໜັກວ່າ ການສ້າງເງື່ອນໄຂສຳລັບການເຮັດວຽກທີ່ເໝາະສົມເທົ່ານັ້ນ ທີ່ຈະເສີມຂະຫຍາຍການພັດທະນາມະນຸດ.

ການວິເຄາະ ຂອງພວກເຮົາ ດ້ານການຊຸກຍູ້ໃຫ້ມີການເຕີບໂຕແບບຍືນຍົງ ແລະ ການມີວຽກເຮັດງານທຳທີ່ເຫມາະສົມ ສຳລັບທຸກຄົນ ແມ່ນເປົ້າຫມາຍການພັດທະນາແບບຍືນຍົງ 8 ແຜນງານ, ແຕ່ຍັງຂາດຄວາມເປັນເຈົ້າການ ຂອງຕົນເອງ ແລະ ບໍ່ໄດ້ເອົາໃຈໃສ່ໃນການແກ້ໄຂບັນຫາ ກ່ຽວກັບການບໍ່ໄດ້ຮັບຄ່າຈ້າງ, ການເຮັດວຽກພາຍໃນຄົວເຮືອນ ແລະ ຄວາມສະເຫມີພາບທາງເພດ. ໃນຄວາມເປັນຈິງ ຈະດີທີ່ສຸດຖ້າລວມເອົາເປົ້າຫມາຍການພັດທະນາແບບຍືນຍົງ ຂໍ້ທີ 8.5 ແລະ ເປົ້າຫມາຍການພັດທະນາແບບຍືນຍົງ ຂໍ້ທີ 5.4 ເຂົ້າມານຳ, ເຊິ່ງໄດ້ມີລາຍລະອຽດ ກ່ຽວກັບການຮັບຮູ້ເຖິງຄວາມຕ້ອງການ ຂອງບຸກຄົນ, ມູນຄ່າການທີ່ບໍ່ໄດ້ຮັບຄ່າຈ້າງງານ ແລະ ການເຮັດວຽກພາຍໃນຄົວເຮືອນ.

ທ່ານ ຄິດວ່າແນວໃດ?